ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ

ເລກທີ...79.../ຄກສພ

ນະຄອນຫຼວງວຽງຈັນ, ວັນທີ...28...ມີນາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກົມຄົ້ນຄວ້າ ແລະ ວາລະສານກວດກາ

- ອີງຕາມ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກວດກາສູນກາງພັກສະບັບເລກທີ 03/ກມສພ, ລົງວັນທີ 19 ມັງກອນ 2022;
- ອີງຕາມ ຂໍ້ຕົກລົງ ຂອງອົງການກວດກາແຫ່ງລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 29/ອກຫລ, ລົງວັນທີ 24 ກຸມພາ 2022;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ-ພະນັກງານ.

## ປະທານ ຄະນະກວດກາສູນກາງພັກ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄົ້ນຄວ້າ ແລະ ວາລະສານກວດກາ ແນ່ໃສ່ການຈັດຕັ້ງປະຕິບັດວຽກງານຄົ້ນຄວ້ານິຕິກຳ, ວາລະສານກວດກາ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມຄົ້ນຄວ້າ ແລະ ວາລະສານກວດກາ ຂຽນເປັນຕົວອັກສອນຫຍໍ້ວ່າ “ກຄວກ” ແມ່ນກົງຈັກຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ; ມີພາລະບົດບາດ ເປັນເສນາທິການໃຫ້ແກ່ຄະນະພັກ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ໃນການເຄື່ອນໄຫວວຽກງານ



SCANNED WITH WIZSCAN

ຄົ້ນຄວ້ານິຕິກຳ; ວຽກງານສຳເນົາເອກະສານ ແລະ ຫ້ອງສະໝຸດ; ວຽກງານໂຄສະນາຂ່າວສານ ແລະ ວາລະສານກວດກາ; ວຽກງານບັນນາທິການ.

## ໝວດທີ 2

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄົ້ນຄວ້າ ແລະ ວາລະສານກວດກາ ມີໜ້າທີ່ດັ່ງນີ້:

3.1. ປະຕິບັດກົດໝາຍ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດຢ່າງເຂັ້ມງວດ;

3.2. ຄົ້ນຄວ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຂອງອົງຄະນະພັກ, ມະຕິກອງປະຊຸມວຽກງານ ກວດ ກາທົ່ວປະເທດ, ແຜນພັດທະນາວຽກງານກວດກາ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຫັນເປັນແຜນການ, ແຜນງານ ເປັນອັນລະອຽດ ແລະ ມີຈຸດສຸມ ຂອງ ກົມ ແລະ ຈັດຕັ້ງປະຕິບັດ;

3.3. ຄົ້ນຄວ້າຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ສ້າງເປັນມະຕິ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ກົນໄກ, ລະບອບ ລະບຽບການກ່ຽວກັບວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງ ຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີ ປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພິຈາລະນາຮັບຮອງ;

3.4. ຄົ້ນຄວ້າທິດສະດີ, ພຶດຕິກຳກ່ຽວກັບວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານ ການສໍ້ລາດບັງຫຼວງທັງພາຍໃນ ແລະ ຕ່າງປະເທດ ເພື່ອໝູນໃຊ້ເຂົ້າໃນການສ້າງນິຕິກຳ ກ່ຽວກັບ ວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳ ຮ້ອງ-ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີຂັ້ນເທິງປະກາດໃຊ້;

3.5. ຄົ້ນຄວ້າສ້າງ ແລະ ປັບປຸງແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບວຽກ ງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

3.6. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າຮ່າງນິຕິກຳຕ່າງໆ ແລະ ຫຼັກສູດການຮຽນ-ການ ສອນ ທັງລະບົບບຳລຸງ ແລະ ລະບົບກໍ່ສ້າງ ຕາມຄວາມຮັບຜິດຊອບຂອງກົມ ແລະ ຕາມການ ມອບໝາຍ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;

3.7. ຄົ້ນຄວ້າສ້າງ ແລະ ປັບປຸງເນື້ອໃນຫຼັກສູດການຮຽນ-ການສອນ ນັບທັງລະບົບບຳລຸງ ແລະ ລະບົບ ກໍ່ສ້າງ ກ່ຽວກັບວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ສອດຄ່ອງກັບການປ່ຽນແປງໃໝ່ແຕ່ລະໄລຍະ;

3.8. ປະສານ ສົມທົບກັບກົມຈັດຕັ້ງ-ພະນັກງານ, ຫ້ອງການ ສ້າງແຜນການຝຶກອົບຮົມວຽກງານ ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ພະນັກງານທີ່ເຮັດວຽກງານ



SCANNED WITH WIZSCAN

ກວດກາ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອສະເໜີຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພິຈາລະຕົກລົງ;

3.9. ຕິດຕາມ ການຂຶ້ນຫ້ອງສອນວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຂອງຄູ-ອາຈານ ທັງລະບົບບໍາລຸງ ແລະ ລະບົບກໍ່ສ້າງ ທີ່ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດຈັດຂຶ້ນ ແລະ ຕາມການເຊີນຂອງກະຊວງ-ອົງການ ແລະ ທ້ອງຖິ່ນ ເພື່ອປະເມີນຜົນການສິດສອນ ແລະ ເນື້ອໃນຂອງບົດສອນ;

3.10. ຊີ້ນໍາ ແລະ ຕິດຕາມ, ກວດກາການປະຕິບັດພາລະບົດບາດ, ໜ້າທີ່ ແລະ ສິດຂອງຄະນະບັນນາທິການສື່ມວນຊົນວຽກງານກວດກາ;

3.11. ຄົ້ນຄວ້າ, ຄັດຈ້ອນເນື້ອໃນຂອງບັນດານິຕິກໍາຕ່າງໆ ກ່ຽວກັບວຽກງານຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງຜົນຂອງການກວດກາທີ່ຮັບຮອງແລ້ວ ເພື່ອນໍາໄປເຜີຍແຜ່ ແລະ ໂຄສະນາຜ່ານສື່ຕ່າງໆ ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ກໍາໄດ້ວຽກງານດັ່ງກ່າວ;

3.12. ຕິດຕາມ ການເຄື່ອນໄຫວຂອງປະທານ, ຮອງປະທານ ແລະ ຄະນະອື່ນໆ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຖ່າຍພາບ, ຂຽນຂ່າວອອກຜ່ານສື່ຕ່າງໆ;

3.13. ປະຕິບັດວຽກງານສໍາເນົາເອກະສານ ແລະ ຫ້ອງສະໝຸດ; ວຽກງານໂຄສະນາຂ່າວສານ ແລະ ວາລະສານກວດກາ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;

3.14. ສະຫຼຸບ, ສັງລວມ ການເຄື່ອນໄຫວວຽກງານຂອງກົມປະຈໍາເດືອນ, 3 ເດືອນ, 6 ເດືອນ, 1 ປີ ແລະ 5 ປີ ລາຍງານໃຫ້ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເປັນປົກກະຕິ;

3.15. ສ້າງແຜນງົບປະມານໃນການເຄື່ອນໄຫວວຽກງານປະຈໍາປີ ຂອງກົມຄົ້ນຄວ້າ ແລະ ວາລະສານກວດກາ ເພື່ອສະເໜີຕໍ່ຫ້ອງການ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;

3.16. ຄຸ້ມຄອງ, ນໍາໃຊ້, ປົກປັກຮັກສາວັດຖຸອຸປະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງກົມ;

3.17. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 4 ຂອບເຂດສິດ

ກົມຄົ້ນຄວ້າ ແລະ ວາລະສານກວດກາ ມີສິດດັ່ງນີ້:

4.1. ສຶກສາອົບຮົມການເມືອງ-ແນວຄິດ, ຄຸ້ມຄອງ, ສັບຊ້ອນ ແລະ ມອບວຽກງານຕ່າງໆໃຫ້ພະນັກງານ-ລັດຖະກອນ ພາຍໃນກົມໃຫ້ແທດເໝາະກັບຄວາມຮູ້ ແລະ ຄວາມສາມາດຕົວຈິງ;

4.2. ພົວພັນກັບບັນດາກະຊວງ-ອົງການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຂໍເອກະສານ ແລະ ຂໍ້ມູນຕ່າງໆ ນໍາມາເກັບຮັກສາໄວ້ຫ້ອງສະໝຸດ ເພື່ອຮັບໃຊ້ການຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກໍາຫຼັກສູດການຮຽນ-ການສອນ ກ່ຽວກັບວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄໍາຮ້ອງ-ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຂຽນຂ່າວຕ່າງໆ;



SCANNED WITH WIZSCAN

4.3. ສະເໜີ, ລາຍງານ ຕໍ່ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ກ່ຽວກັບການປະຕິບັດວຽກງານວິຊາສະເພາະ ແລະ ບັນຫາອື່ນໆທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ ພ້ອມທັງຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ;

4.4. ສະເໜີສ້າງ, ປັບປຸງ, ຈັດພິມ, ຄຸ້ມຄອງ ແລະ ແຈກຢາຍຫຼັກສູດ ການຮຽນ-ການສອນ ທັງໄລຍະສັ້ນ ແລະ ໄລຍະຍາວ;

4.5. ເຂົ້າຮ່ວມກັບຄະນະຕ່າງໆ ທີ່ເຄື່ອນໄຫວວຽກງານຄົ້ນຄວ້າ, ແລກປ່ຽນບົດຮຽນ ຢູ່ພາຍໃນ ແລະຕ່າງປະເທດ ຕາມການຕົກລົງຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;

4.6. ສ້າງແຜນການເຄື່ອນໄຫວເຮັດວຽກງານຕາມພາລະບົດບາດຂອງກົມ ນຳບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ເພື່ອສະເໜີຕໍ່ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພິຈາລະນາຕົກລົງ;

4.7. ປະສານສົມທົບກັບກົມຈັດຕັ້ງ-ພະນັກງານ ເພື່ອສະເໜີຄະນະກວດກາສູນກາງພັກ ແລະ ອົງການກວດ ກາແຫ່ງລັດ ພິຈາລະນາຕົກລົງແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍ, ບຳລຸງຍົກລະດັບທາງດ້ານທິດສະດີ, ວິຊາສະເພາະ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານພາຍໃນກົມ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງກົມ;

4.8. ເຊັນເອກະສານຕ່າງໆ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງກົມ;

4.9. ນຳໃຊ້ສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກົມຄົ້ນຄວ້າ ແລະ ວາລະສານກວດກາ ປະກອບມີ:

5.1. ພະແນກ ຄົ້ນຄວ້ານິຕິກຳ;

5.2. ພະແນກ ສຳເນົາເອກະສານ ແລະ ຫ້ອງສະໝຸດ;

5.3. ພະແນກ ໂຄສະນາຂ່າວສານ ແລະ ວາລະສານກວດກາ;

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

6.1. ມີຫົວໜ້າກົມ 1 ທ່ານຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຈາກຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ; ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ກ່ຽວກັບຜົນສຳເລັດ, ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ໜ້າທີ່, ສິດ ແລະ ຕາມການມອບໝາຍ.

6.2. ມີຮອງຫົວໜ້າກົມ ຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຈາກປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ;



SCANNED WITH WIZSCAN

ຮອງຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ຫົວໜ້າກົມ ແລະ ຂັ້ນເທິງ ໃນການນໍາພາ-ຊີ້ນໍາ ແລະ ຄຸ້ມຄອງວຽກງານຂອງກົມ, ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຫົວໜ້າກົມ.

6.3. ປະກອບມີຫົວໜ້າ ແລະ ຮອງຫົວໜ້າພະແນກຈໍານວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕໍາແໜ່ງຈາກປະທານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຕາມການສະເໜີຂອງຫົວໜ້າກົມ;

ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະກົມ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດພາລະບົດບາດ, ໜ້າທີ່, ສິດຂອງພະແນກຕົນ ແລະ ຕາມການມອບໝາຍ.

6.4. ປະກອບມີພະນັກງານວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານຕົວຈິງ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

### ມາດຕາ 7 ພະແນກຄົ້ນຄວ້ານິຕິກໍາ

ພະແນກ ຄົ້ນຄວ້ານິຕິກໍາ ມີໜ້າທີ່ດັ່ງນີ້:

7.1. ຄົ້ນຄວ້າຜັນຂະຫຍາຍມະຕິກອງປະຊຸມ, ແຜນການ, ແຜນງານຂອງກົມ ຫັນເປັນແຜນການ, ແຜນງານເປັນອັນລະອຽດ ແລະ ມີຈຸດສຸມຂອງພະແນກ ແລະ ຈັດຕັ້ງປະຕິບັດ;

7.2. ຄົ້ນຄວ້າຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ມະຕິ, ຄໍາສັ່ງ, ກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ ອອກເປັນມະຕິ, ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ, ກົນໄກ, ລະບອບລະບຽບການກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄໍາຮ້ອງ-ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອນໍາສະເໜີຄະນະກົມພິຈາລະນາ;

7.3. ນໍາເອົາຮ່າງກົດໝາຍ, ຍຸດທະສາດ ແລະ ນິຕິກໍາຕ່າງໆ ກ່ຽວກັບວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ລົງໄປທາບທາມຄໍາຄິດເຫັນ ຢູ່ບັນດາກະຊວງ-ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອສັງລວມເອົາຄໍາຄິດເຫັນ ຈາກຫຼາຍພາກສ່ວນ ຮັບໃຊ້ການສ້າງ ແລະ ປັບປຸງນິຕິກໍາ;

7.4. ຄົ້ນຄວ້າກໍານົດຫົວຂໍ້ນິຕິກໍາໃໝ່ ທີ່ຈະສ້າງໃໝ່ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄໍາຮ້ອງ-ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່ແຕ່ລະໄລຍະ;

7.5. ກໍານົດຫົວຂໍ້ນິຕິກໍາທີ່ຈະປັບປຸງ ກ່ຽວກັບວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄໍາຮ້ອງ-ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່ແຕ່ລະໄລຍະ;



SCANNED WITH WIZSCAN

7.6. ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານຕິດຕາມກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີຂອງບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງ ທີ່ໄດ້ນຳໃຊ້ ແລະ ຖືກຮັບຮອງ;

7.7. ເຄື່ອນໄຫວເກັບກຳຂໍ້ມູນ ຫຼື ປະສານສົມທົບກັບກົມທີ່ກ່ຽວຂ້ອງ ຢູ່ພາຍໃນຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ກ່ຽວກັບການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິ, ຄຳສັ່ງ ຄຳແນະນຳ, ລະບຽບການຕ່າງໆຂອງພັກ, ຍຸດທະສາດ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ເພື່ອເປັນຂໍ້ມູນ ຮັບໃຊ້ການຕິດຕາມປະເມີນຜົນ, ສ້າງ ແລະ ປັບປຸງນິຕິກຳ;

7.8. ເປັນເຈົ້າການປະສານສົມທົບກັບກົມວິຊາການ ເພື່ອກວດກາ, ຮຽບຮຽງບັນດາເອກະສານ ຫຼື ນິຕິກຳທີ່ຫ້ອງການ ແລະ ບັນດາກົມໄດ້ຮ່າງຂຶ້ນ ກ່ອນຈະນຳສະເໜີ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ອະນຸມັດປະກາດໃຊ້;

7.9. ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງນິຕິກຳທີ່ສ້າງຂຶ້ນໃໝ່ ພາຍໃນອົງການຂອງຕົນ ຫຼື ຕາມການສະເໜີຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕາມການມອບໝາຍຂອງກົມ;

7.10. ຈັດກອງປະຊຸມສຳມະນາ, ປຶກສາຫາລືດ້ານວິຊາການ ເພື່ອປະກອບຄຳເຫັນໃສ່ຮ່າງນິຕິກຳ ທີ່ສ້າງຂຶ້ນໃໝ່ ແລະ ປັບປຸງ ໃນແຕ່ລະໄລຍະ;

7.11. ຕິດຕາມ, ຊຸກຍູ້ ນຳເອົານິຕິກຳ ທີ່ມີຜົນບັງຄັບໃຊ້ ລົງຈົດໝາຍເຫດທາງລັດຖະການ ຂອງລັດຖະບານ;

7.12. ຈັດຕັ້ງການຖອດຖອນບົດຮຽນ ຫຼື ຮ່ວມກັບກົມວິຊາການ ຢູ່ພາຍໃນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວກວດກາຕົວຈິງ ຜ່ານມາ ເພື່ອຕິດຕາມປະເມີນຜົນການເຄື່ອນໄຫວ ແລະ ການປະຕິບັດມະຕິ, ຄຳສັ່ງ, ຄຳແນະນຳ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີຂອງບຸກ ຄົນນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອນຳມາເປັນຂໍ້ມູນຮັບໃຊ້ໃຫ້ການສ້າງ ແລະ ປັບປຸງນິຕິກຳ;

7.13. ຄົ້ນຄວ້າ ແລະ ເລືອກເຟັ້ນເອົາບົດຮຽນ ຂອງຕ່າງປະເທດ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອເປັນຂໍ້ມູນຮັບໃຊ້ການຕິດຕາມປະເມີນຜົນ, ສ້າງ ແລະ ປັບປຸງນິຕິກຳ;

7.14. ຄົ້ນຄວ້າ ສ້າງ, ປັບປຸງ ແລະ ປະເມີນເນື້ອໃນຫຼັກສູດການຮຽນ-ການສອນ ໃນລະບົບ ບຳລຸງ-ກໍ່ສ້າງ ກ່ຽວກັບວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ສອດຄ່ອງກັບແຕ່ລະໄລຍະ;



SCANNED WITH WIZSCAN

7.15. ເຄື່ອນໄຫວເຜີຍແຜ່ກົດໝາຍ, ນິຕິກຳຕ່າງໆ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມການເຫັນດີຂອງຄະນະກົມ ແລະ ຂັ້ນເທິງ;

7.16. ເຄື່ອນໄຫວຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳຕ່າງໆ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ ຂອງບັນດາກະຊວງ-ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕາມການເຫັນດີຂອງຄະນະກົມ ແລະ ຂັ້ນເທິງ;

7.17. ຄົ້ນຄວ້ານຳສະເໜີບັນຫາຕ່າງໆ ທີ່ຕິດພັນກັບພາລະບົດບາດ, ໜ້າທີ່, ສິດ ຂອງພະແນກ ເພື່ອສະເໜີຄະນະກົມພິຈາລະນາ ຫຼື ສະເໜີຂັ້ນເທິງພິຈາລະນາ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງພະນັກງານພາຍໃນພະແນກ;

7.18. ນຳໃຊ້, ຄຸ້ມຄອງ, ປົກປັກຮັກສາ ວັດຖຸປະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງພະແນກ ແລະ ຂອງກົມ;

7.19. ສ້າງແຜນການ ແລະ ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ 5 ປີ;

7.20. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງກົມ ແລະ ຂັ້ນເທິງ.

**ມາດຕາ 8 ພະແນກ ສຳເນົາເອກະສານ ແລະ ຫ້ອງສະໝຸດ**

ພະແນກ ສຳເນົາເອກະສານ ແລະ ຫ້ອງສະໝຸດ ມີໜ້າທີ່ດັ່ງນີ້:

8.1. ຄົ້ນຄວ້າ ຜັນຂະຫຍາຍມະຕິກອງປະຊຸມ, ແຜນການ, ແຜນງານຂອງກົມ ຫັນເປັນແຜນການ, ແຜນງານເປັນອັນລະອຽດ ແລະ ມີຈຸດສຸມຂອງພະແນກ ແລະ ຈັດຕັ້ງປະຕິບັດ;

8.2. ຄົ້ນຄວ້າ, ເກັບກຳ, ທ້ອນໂຮມບັນດາຂໍ້ມູນ, ເອກະສານຢູ່ພາຍໃນ ແລະ ຕ່າງປະເທດ ທີ່ພົວພັນເຖິງວຽກງານຕິດຕາມ, ກວດກາພັກ-ລັດ ແລະ ເອກະສານອື່ນກ່ຽວຂ້ອງ ເພື່ອນຳມາສຳເນົາ ແລະ ຮັບໃຊ້ການຄົ້ນຄວ້າ;

8.3. ຄຸ້ມຄອງ ແລະ ປົກປັກຮັກສາ, ສຳເນົາເອກະສານ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ລວມທັງແຜ່ນຊີດີ, ຟາຍເອກະສານ ໃຫ້ຮັບປະກັນຄວາມປອດໄພ ແລະ ນຳໃຊ້ໄດ້ຢ່າງຍາວນານ;

8.4. ກວດກາ ແລະ ຕີລາຄາຄຸນຄ່າ ຂອງເອກະສານໃນແຕ່ລະໄລຍະ ເພື່ອເກັບຮັກສາ ແລະ ທຳລາຍຖິ້ມ;

8.5. ສະໜອງຂໍ້ມູນ ກ່ຽວກັບການເຄື່ອນໄຫວວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ຂໍ້ມູນອື່ນທີ່ກ່ຽວຂອງ ໃຫ້ນັກຄົ້ນຄວ້າ, ຜູ້ມັກການອ່ານ ແລະ ຮຽນຮູ້ ທີ່ມາຊົມໃຊ້ບໍລິການຫ້ອງສະໝຸດ ຫຼື ບຸກຄົນອື່ນ ທີ່ຕ້ອງການຂໍ້ມູນນຳໄປຄົ້ນຄວ້າ, ແລກປ່ຽນບົດຮຽນຢູ່ພາຍໃນ ແລະ ຕ່າງປະເທດ;



SCANNED WITH WIZSCAN

8.6. ເກັບກຳ, ຮັບໂຮມ, ຂຶ້ນບັນຊີ, ປົກປັກຮັກສາບັນດາສື່ສິ່ງພິມ ແລະ ບໍ່ແມ່ນສິ່ງພິມທີ່ມີຄຸນຄ່າທາງດ້ານປະຫວັດສາດໃນອະດີດ ແລະ ປັດຈຸບັນຂອງລາວ ແລະ ຕ່າງປະເທດ ເພື່ອສະໜອງຂໍ້ມູນ-ຂ່າວສານໃຫ້ແກ່ນັກຄົ້ນຄວ້າ ແລະ ຜູ້ມັກການອ່ານ ແລະ ຮຽນຮູ້;

8.7. ໄຈ້ແຍກວິເຄາະຫົວເລື່ອງ, ໝວດໝູ່ປຶ້ມປະເພດຕ່າງໆໃຫ້ມີຄວາມເປັນເອກະພາບກັບບັນດາຫ້ອງສະໝຸດອື່ນໆ;

8.8. ສັງລວມ, ເກັບກຳທ້ອນໂຮມຂໍ້ມູນ ນິຕິກຳຕ່າງໆທີ່ພົວພັນເຖິງວຽກງານຕິດຕາມ, ກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳຮ້ອງ-ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຈາກກະຊວງ-ອົງການ, ສະຖາບັນ ແລະ ທ້ອງຖິ່ນ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າ;

8.9. ແລກປ່ຽນບົດຮຽນກັບພາກສ່ວນຕ່າງໆ ກ່ຽວກັບວຽກງານຄຸ້ມຄອງຫ້ອງສະໝຸດ;

8.10. ບັນທຶກບັນດາເອກະສານຂາເຂົ້າ-ຂາອອກຂອງກົມ, ຈັດພິມ, ອັດສຳເນົາ, ເກັບມ້ຽນ ແລະ ຄຸ້ມຄ້ອງປົກປັກຮັກສາເອກະສານຕ່າງໆ;

8.11. ຄົ້ນຄວ້າ, ປັບປຸງພາລະບົດບາດ, ກຳນົດຕຳແໜ່ງງານ, ປະເມີນໜ່ວຍພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ປະຈຳປີ, 5 ປີ ແລະ ຕາມແຈ້ງການຂອງກົມຈັດຕັ້ງ-ພະນັກງານ ຫຼື ການຊີ້ນຳຂອງຄະນະກົມ;

8.12. ສະຫຼຸບ ແລະ ສ້າງແຜນການເຄື່ອນໄຫວວຽກງານຂອງພະແນກ, ຂອງກົມ ແລະ ໜ່ວຍພັກ ປະຈຳເດືອນ, 3 ເດືອນ 6 ເດືອນ, ປະຈຳປີ ແລະ 5 ປີ ໃຫ້ກົມ ແລະ ຂັ້ນເທິງໄດ້ຮັບຊາບ;

8.13. ສ້າງແຜນງົບປະມານ ໃນການເຄື່ອນໄຫວວຽກງານປະຈຳປີ ຂອງກົມຄົ້ນຄວ້າ ແລະ ວາລະສານກວດກາ ເພື່ອສະເໜີຕໍ່ຫ້ອງການ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເອົາເຂົ້າແຜນງົບປະມານ;

8.14. ຂຶ້ນແຜນສະເໜີປະກອບ, ສ້ອມແປງ, ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາວັດຖຸອຸປະກອນ, ເຄື່ອງໃຊ້ຕ່າງໆຂອງກົມ ແລະ ຂອງສ່ວນລວມ;

8.15. ຄົ້ນຄວ້ານຳສະເໜີບັນຫາຕ່າງໆ ທີ່ພົວພັນກັບການປະຕິບັດນະໂຍບາຍຕ່າງໆ ຕາມການຕົກລົງເຫັນດີຂອງຄະນະກົມ ແລະ ຕິດຕາມການເຄື່ອນໄຫວວຽກງານ ແລະ ການດຳລົງຊີວິດຂອງພະນັກງານ-ລັດຖະກອນພາຍໃນກົມ;

8.16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກົມ ແລະ ຂັ້ນເທິງ.

### ມາດຕາ 9 ພະແນກໂຄສະນາຂ່າວສານ ແລະ ວາລະສານກວດກາ

ພະແນກໂຄສະນາຂ່າວສານ ແລະ ວາລະສານກວດກາ ມີໜ້າທີ່ດັ່ງນີ້:

9.1. ຄົ້ນຄວ້າ ຜັນຂະຫຍາຍມະຕິກອງປະຊຸມ, ແຜນການ, ແຜງານຂອງກົມ ທັນເປັນແຜນການ, ແຜນງານ ເປັນອັນລະອຽດ ແລະ ມີຈຸດສຸມຂອງພະແນກ ແລະ ຈັດຕັ້ງປະຕິບັດວຽກງານໂຄສະນາຂ່າວສານ ແລະ ວາລະສານກວດກາ;



SCANNED WITH WIZSCAN

9.2. ຄົ້ນຄວ້າແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ວຽກງານພິຈາລະນາຄຳຮ້ອງ-ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ວຽກງານອື່ນທີ່ກ່ຽວຂ້ອງ ເພື່ອຄັດຈ້ອນເນື້ອໃນນຳມາຂຽນຂ່າວ ອອກເຜີຍແຜ່, ໂຄສະນາຜ່ານພາຫະນະສື່ມວນຊົນ;

9.3. ຄົ້ນຄວ້າເນື້ອໃນວິທີການ ແລະ ມາດຕະການ ,ຮູບການ , ກ່ຽວກັບການໂຄສະນາປຸກລະດົມດ້ວຍຄຳຂວັນ, ວາງສະແດງຮູບພາບ ສາຍວີດີໂອ ,ກ່ຽວກັບວຽກງານກວດກາພັກ, ກວດກາລັດສະກັດ , ກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ວຽກງານພິຈາລະນາຄຳຮ້ອງ-ຄຳສະເໜີ;

9.4. ຄົ້ນຄວ້າ ບົດຮຽນ ຂອງບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອໂຄສະນາ, ເຜີຍແຜ່ທາງວາລະສານ, ລາຍການວິທະຍຸ ແລະ ລາຍການໂທລະພາບວຽກງານກວດກາ;

9.5. ຄົ້ນຄວ້າເນື້ອໃນຂອງແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ຂໍ້ກຳນົດຕ່າງໆ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ບົດທິດສະດີຕ່າງໆ ເພື່ອໂຄສະນາ, ເຜີຍແຜ່ລົງວາລະສານກວດກາ;

9.6. ຜະລິດລາຍການວິທະຍຸ, ໂທລະພາບ, ວາລະສານກວດກາ ແລະ ຈັດພິມເອກະສານອື່ນໆ ກ່ຽວກັບການເຄື່ອນໄຫວວຽກງານຕິດຕາມ, ກວດກາ ຕາມການຕົກລົງເຫັນດີ ຂອງຄະນະກົມ ແລະ ຂັ້ນເທິງ;

9.7. ພົວພັນປະສານສົມທົບ ແລະ ຮ່ວມມືກັບອົງການສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານໂຄສະນາຂ່າວສານ ຕາມການຕົກລົງເຫັນດີຂອງຄະນະກົມ ແລະ ຂັ້ນເທິງ;

9.8. ຕິດຕາມ, ກວດກາການໂຄສະນາການເຜີຍແຜ່ຈາກສື່ ທັງພາກລັດ ແລະ ເອກະຊົນ ອອກຜ່ານສື່ສິ່ງພິມ ແລະ ສື່ເອເລັກໂຕນິກ ກ່ຽວກັບວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອຄວາມຖືກຕ້ອງ ຂອງການອອກຂ່າວ. ກໍລະນີມີຂໍ້ຜິດພາດຂອງຂ່າວຕ້ອງປະສານກັບພາກສ່ວນກ່ຽວຂ້ອງແກ້ໄຂ ຫຼື ແກ້ຂ່າວທັນເວລາ ພ້ອມທັງສັງລວມລາຍງານໃຫ້ຄະນະກົມ ແລະ ຂັ້ນເທິງຮັບຊາບ;

9.9. ຄົ້ນຄວ້ານຳສະເໜີ ນະໂຍບາຍ ຄ່ານາມປາກກາ ຂອງເພື່ອນຮ່ວມງານຕາມຂໍ້ກຳນົດທີ່ໄດ້ກຳນົດໄວ້;

9.10. ຄົ້ນຄວ້າສ້າງ ປຶ້ມປະຫວັດມູນເຊື້ອ ກ່ຽວກັບວຽກງານກວດກາ ເປັນແຕ່ລະໄລຍະ;

9.11. ຄົ້ນຄວ້າສ້າງ ວີດີໂອ, ສາລະຄະດີປະຫວັດມູນເຊື້ອ ກ່ຽວກັບວຽກງານກວດກາ ເປັນແຕ່ລະໄລຍະ;

9.12. ສ້າງແຜນການເຄື່ອນໄຫວເກັບກຳຂ່າວ ແລະ ຂຽນຂ່າວ ການເຄື່ອນໄຫວ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ, ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ເພື່ອອອກຂ່າວທາງໜັງສືພິມ, ລາຍການວິທະຍຸ, ໂທລະພາບ ແລະ ເວັບໄຊ ຮັບປະກັນການເຜີຍແຜ່, ໂຄສະນາຂໍ້ມູນຂ່າວສານອອກສູ່ສັງຄົມຢ່າງກວ້າງຂວາງ, ຖືກຕ້ອງ ແລະ ວ່ອງໄວທັນກັບສະພາບການ;



SCANNED WITH WIZSCAN

9.13. ສ້າງແຜນການລົງເຄື່ອນໄຫວເກັບກຳຂໍ້ມູນ ແລະ ອັດລາຍການໂທລະພາບວຽກງານກວດກາ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ, ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ;

9.14. ປະສານສົມທົບກັບພະແນກກ່ຽວຂ້ອງ ຂອງກົມຈັດຕັ້ງ-ພະນັກງານ, ຫ້ອງການ ເພື່ອສ້າງແຜນການບຳລຸງ-ກໍ່ສ້າງ, ຝຶກອົບຮົມ ແລະ ສຳມະນາໃຫ້ພະນັກງານຕາໜ່າງຂ່າວ ຢູ່ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ໃນຂົງເຂດວຽກງານກວດກາທົ່ວປະເທດ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດດ້ານວິຊາສະເພາະສື່ມວນຊົນ ໃຫ້ມີການພັດທະນາເທື່ອລະກ້າວ, ແນໃສ່ຮັບໃຊ້ວຽກງານເຜີຍແຜ່, ໂຄສະນາ ກ່ຽວກັບວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃຫ້ກວ້າງຂວາງ ແລະ ເລິກເຊິ່ງ;

9.15. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສື່ມວນຊົນປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ 5 ປີ;

9.16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກົມ ແລະ ຂັ້ນເທິງ.

## ໝວດທີ 5

## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 10 ຫຼັກການ

ກົມຄົ້ນຄວ້າ ແລະ ວາລະສານກວດກາ ເຄື່ອນໄຫວຕາມຫຼັກການດັ່ງນີ້:

10.1. ການເຄື່ອນໄຫວປະຕິບັດໜ້າທີ່ການເມືອງ ແລະ ວິຊາສະເພາະຕ້ອງກຳແໜ້ນມະຕິ, ຄຳສັ່ງ, ລະບຽບຫຼັກການລວມຂອງພັກ ແລະ ອີງໃສ່ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ;

10.2. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຄົ້ນຄວ້າ, ພິຈາລະນາບັນຫາລວມຂອງກົມເປັນໝູ່ຄະນະ;

10.3. ປະຕິບັດລະບອບການຕົກລົງຫົວໜ້າດຽວ ບົນພື້ນຖານຄວາມເປັນເອກະພາບ ຂອງໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ.

### ມາດຕາ 11 ແບບແຜນວິທີເຮັດວຽກ

ກົມຄົ້ນຄວ້າ ແລະ ວາລະສານກວດກາ ມີແບບແຜນວິທີເຮັດວຽກດັ່ງນີ້:

11.1. ເຮັດວຽກມີແຜນງານ, ແຜນການ ແລະ ກິດຈະກຳ; ຈັດຕັ້ງປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມມີເປົ້າໝາຍເປັນແຕ່ລະໄລຍະ; ພົວພັນປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ສອດຄ່ອງຕາມລະບຽບການ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;

11.2. ນຳເອົາແນວທາງນະໂຍບາຍຂອງພັກ-ລັດ ກ່ຽວກັບວຽກງານກວດກາພັກ-ລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ວຽກງານອື່ນທີ່ກ່ຽວຂ້ອງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;



SCANNED WITH WIZSCAN

11.3. ການຈັດຕັ້ງປະຕິບັດວຽກງານມີການຕິດຕາມ, ຊຸກຍູ້, ກວດກາ ແລະ ສະຫຼຸບຖອດຖອນບົດຮຽນເປັນປົກກະຕິໃນແຕ່ລະເດືອນ, 3 ເດືອນ, 6 ເດືອນ, 1 ປີ ແລະ 5 ປີ;

11.4. ປະຕິບັດລະບອບປະຊຸມປະຈໍາເດືອນເປັນປົກກະຕິ, ກໍລະນີຈໍາເປັນ ແລະ ຮີບດ່ວນສາມາດປະຊຸມວິ ສາມັນໄດ້;

11.5. ປະຕິບັດລະບອບສ່ອງແສງລາຍງານຂໍທິດຊີ້ນໍາຈາກ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດຢ່າງເປັນປົກກະຕິ.

## ໝວດທີ 6

## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ ແລະ ຕາປະທັບ**

ກົມຄົ້ນຄວ້າ ແລະ ວາລະສານກວດກາ ມີງົບປະມານ ແລະ ຕາປະທັບ ເພື່ອນໍາໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ກົມຄົ້ນຄວ້າ ແລະ ວາລະສານກວດກາ, ຫ້ອງການ, ບັນດາກົມຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄົ້ນຄວ້າ ແລະ ວາລະສານກວດກາ ສະບັບເລກທີ 447/ຄກສພ, ລົງວັນທີ 21 ຕຸລາ 2019 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກວດກາສູນກາງພັກ**

ຄໍາພັນ ພົມມະທັດ



SCANNED WITH WIZSCAN